UNITED NATIONS LAO PDR

ເອວ ນິໂຍ 2026-27

ຄວາມໝາຍຕໍ່ ສປປ ລາວ ແລະ ວິທີການກຽມຄວາມພ້ອມ

ຖະແຫຼງການ ວັນທີ 13 ກໍລະກົດ 2026

ປະກົດການເອວ ນິໂຍ (El Niño) ກຳລັງເກີດຂຶ້ນ ແລະ ຄາດວ່າຈະແກ່ຍາວໄປຈົນຮອດທ້າຍປີ 2026, ເຊິ່ງຈະເພີ່ມຄວາມສ່ຽງຕໍ່ການເກີດອຸນຫະພູມທີ່ຮ້ອນຂຶ້ນ, ປະລິມານນ້ຳຝົນບໍ່ສະໝ່ຳສະເໝີ, ໄພແຫ້ງແລ້ງ ແລະ ນ້ຳຖ້ວມກະທັນຫັນໃນບາງພື້ນທີ່ທົ່ວ ສປປ ລາວ.

1 ເອວ ນິໂຍ ແມ່ນຫຍັງ?

ມະຫາສະໝຸດປາຊີຟິກ ອຸ່ນຂຶ້ນ → ການໝູນວຽນຂອງຊັ້ນ ບັນຍາກາດປ່ຽນແປງ → ຮູບແບບຂອງຝົນປ່ຽນ ທິດທາງ → ອຸນຫະພູມຮ້ອນຂຶ້ນ ແລະ ການ ປະເຊີນກັບສະພາບອາກາດທີ່ ຮຸນແຮງຂຶ້ນ

ເອວ ນິໂຍ ແມ່ນປະກົດການທາງພູມອາກາດທີ່ເກີດຂຶ້ນເອງຕາມທຳມະຊາດ ໃນທຸກໆ 2-7 ປີ ເມື່ອອຸນຫະພູມໜ້ານ້ຳທະເລໃນມະຫາສະໝຸດປາຊີຟິກເຂດຮ້ອນອຸ່ນຂຶ້ນກວ່າປົກກະຕິ.

ການປ່ຽນແປງເຫຼົ່ານີ້ສົ່ງຜົນກະທົບຕໍ່ຮູບແບບສະພາບອາກາດທົ່ວໂລກ ແລະ ອາດນຳໄປສູ່ສະພາບອາກາດທີ່ຮ້ອນຈັດ, ໄພແຫ້ງແລ້ງ, ຝົນຕົກໜັກ ແລະ ນ້ຳຖ້ວມໃນແຕ່ລະພາກສ່ວນຂອງໂລກ.

2 ການຄາດຄະເນຫຼ້າສຸດ

(ຂໍ້ມູນຈາກ ວັນທີ 9 ກໍລະກົດ 2026)

ກຳລັງເກີດຂຶ້ນ

ປະຈຸບັນເກີດມີປະກົດການ ເອວ ນິໂຍ

ກຳລັງທະວີຄວາມຮຸນແຮງ

ຄາດຄະເນວ່າ ປະກົດການ ເອວ ນິໂຍ ຈະຮຸນແຮງຂຶ້ນຢ່າງວ່ອງໄວ ໃນໄລຍະເຄິ່ງຫຼັງຂອງປີ 2026

ເຫດການທີ່ຮຸນແຮງ

ອົງການອຸຕຸນິຍົມວິທະຍາໂລກ (WMO) ຄາດຄະເນວ່າຈະເກີດປະກົດການເອວ ນິໂຍລະດັບຮຸນແຮງໃນໄລຍະເດືອນກໍລະກົດ - ກັນຍາ 2026

>90%

ຄາດວ່າ ປະກົດການ ເອວ ນິໂຍ ຈະແກ່ຍາວໄປຈົນຮອດຕົ້ນປີ 2027 (ອີງຕາມຂໍ້ມູນຂອງ NOAA)

3 ທ່າອ່ຽງສະພາບອາກາດຂອງ ສປປ ລາວ

ພາກເໜືອ

ມີສະພາບອາກາດປະສົມປະສານ

- ມີໂອກາດເກີດຝົນຕົກໜັກ ສະເພາະພື້ນທີ່
- ບາງພື້ນທີ່ມີປະລິມານຝົນສູງ ກວ່າປົກກະຕິສູງສຸດເຖິງ 40%

ພາກກາງ

ຝົນຕົກໃກ້ຄຽງກັບຄ່າປົກກະຕິ

- ມີປະລິມານຝົນໃກ້ຄຽງກັບຄ່າ ປົກກະຕິ
- ແຂວງຄຳມ່ວນ ແລະ ແຂວງ ສະຫວັນນະເຂດ ຈະແຫ້ງແລ້ງ ກວ່າຄ່າສະເລ່ຍເລັກໜ້ອຍ

ພາກໃຕ້

ຄວາມສ່ຽງໄພແຫ້ງແລ້ງສູງສຸດ

- ມີໂອກາດເກີດໄພແຫ້ງແລ້ງ ໃນຫຼາຍພື້ນທີ່
- ອາດຈະແກ່ຍາວໄປຈົນຮອດ ຕົ້ນປີ 2027

ທົ່ວປະເທດ

ອຸນຫະພູມຈະສູງກວ່າປົກກະຕິ +0.5 ຫາ +2.0 ອົງສາເຊ ຍາວ ໄປຈົນຮອດເດືອນມັງກອນ 2027

ແຫຼ່ງຂໍ້ມູນ: DMH seasonal outlook, ສະບັບອອກວັນທີ 16 ມີຖຸນາ 2026

ຂໍ້ຄວາມສຳຄັນ

ປະກົດການ ເອວ ນິໂຍ (El Niño) ແມ່ນກຳລັງເກີດຂຶ້ນ ແລະ ຄາດຄະເນວ່າຈະທະວີຄວາມຮຸນແຮງຂຶ້ນຕະຫຼອດຊ່ວງທ້າຍປີ 2026, ໂດຍຜົນກະທົບອາດຈະແກ່ຍາວໄປຈົນເຖິງຕົ້ນປີ 2027. ດັ່ງນັ້ນ, ຈຶ່ງຂໍໃຫ້ບັນດາອົງການສະຫະປະຊາຊາດ ແລະ ຄູ່ຮ່ວມພັດທະນາ ທົບທວນຄືນຜົນກະທົບຕໍ່ກັບແຜນງານທີ່ກຳລັງຈັດຕັ້ງປະຕິບັດຢູ່, ການວາງແຜນກຽມພ້ອມຮັບມືສຸກເສີນ, ຄວາມພ້ອມດ້ານການສະໜອງປັດໄຈຕ່າງໆ, ການປະຕິບັດງານລ່ວງໜ້າ, ແລະ ການປະສານງານກັບຄູ່ຮ່ວມງານລັດຖະບານ.

POTENTIAL IMPACTS AND EARLY ACTIONS

4 ຜົນກະທົບທີ່ອາດເກີດຂຶ້ນໃນແຕ່ລະຂະແໜງການ

ຂະແໜງກະສິກຳ
- ໄລຍະເວລາການປູກຝັງ (ພືດສະພາ - ກໍລະກົດ) ແມ່ນຊ້ອນທັບກັບການເກີດ ເອວ ນີໂຍ
- ການເຮັດນາທີ່ອາໄສນ້ຳຝົນອາດຈະໄດ້ຮັບຜົນກະທົບ
- ຜົນຜະລິດອາດຈະຂາດແຄນໃນຊ່ວງເກັບກ່ຽວ

ຄວາມໝັ້ນຄົງທາງສະບຽງອາຫານ
- ຜົນຜະລິດສະບຽງອາຫານຫຼຸດລົງ
- ລາຄາອາຫານເພີ່ມສູງຂຶ້ນ
- ສົ່ງຜົນໃຫ້ຄົວເຮືອນໃນຊົນນະບົດ ແລະ ກຸ່ມຄົນເປາະບາງ ມີຄວາມສ່ຽງສູງຂຶ້ນ

ຊັບພະຍາກອນນ້ຳ
- ປະລິມານນ້ຳໃນແມ່ນ້ຳຫຼຸດລົງ
- ລະດັບນ້ຳໃນອ່າງເກັບນ້ຳຕ່ຳລົງ
- ມີຄວາມສ່ຽງຂາດແຄນນ້ຳດື່ມ
- ມີຂໍ້ຈຳກັດດ້ານຊົນລະປະທານ

ພະລັງງານ
- ມີໂອກາດທີ່ການຜະລິດໄຟຟ້າພະລັງງານນ້ຳຈະຫຼຸດລົງ
- ເພີ່ມຄວາມກົດດັນຕໍ່ລະບົບການສະໜອງໄຟຟ້າ

ສິ່ງແວດລ້ອມ
- ຄວາມສ່ຽງຂອງການເກີດໄຟປ່າສູງຂຶ້ນ
- ແຫຼ່ງທີ່ຢູ່ອາໄສຂອງສັດປ່າໄດ້ຮັບຜົນກະທົບ
- ເກີດຄວາມຕຶງຄຽດຕໍ່ລະບົບນິເວດ

ສາທາລະນະສຸກ
- ເຈັບປ່ວຍຈາກພະຍາດທີ່ມາກັບຄວາມຮ້ອນ
- ພະຍາດທາງນ້ຳ
- ຄຸນນະພາບອາກາດຊຸດໂຊມລົງຍ້ອນຄວັນໄຟປ່າ

5 ສິ່ງທີ່ພວກເຮົາຄວນເຮັດໃນເວລານີ້?

ຕິດຕາມເຝົ້າລະວັງ
- ຕິດຕາມການພະຍາກອນອາກາດ, ຄຳແນະນຳ ແລະ ຄຳເຕືອນຈາກກົມອຸຕຸນິຍົມ ແລະ ອຸທົກກະສາດ (DMH) ຢ່າງໃກ້ຊິດ
- ຕິດຕາມລະດັບນ້ຳ, ສະພາບອ່າງເກັບນ້ຳ ແລະ ການມີຢູ່ຂອງນ້ຳ
- ຕິດຕາມສະພາບພືດພັນ, ຜົນຜະລິດສະບຽງອາຫານ ແລະ ລາຄາຕະຫຼາດ

ປະສານງານ
- ຮັບປະກັນໃຫ້ມີການແບ່ງປັນຂໍ້ມູນ
- ທົບທວນ ແລະ ປັບປຸງແຜນການຮັບມື
- ປັບປຸງການຈັດຕັ້ງການກຽມຄວາມພ້ອມ
- ຮັກສາການປະສານງານຜ່ານກົນໄກຄວາມພ້ອມຂອງລັດຖະບານ ແລະ ລະຫວ່າງອົງການຈັດຕັ້ງ

ກຽມຄວາມພ້ອມ
- ທົບທວນຄວາມພ້ອມ ແລະ ກຽມເປີດນຳໃຊ້ແຜນຫາກບັນລຸເງື່ອນໄຂທີ່ກຳນົດໄວ້.
- ກວດກາສາງສິນຄ້າ, ການຈັດຊື້ ແລະ ຄວາມພ້ອມໃນການຂົນສົ່ງໄລຍະສຸດທ້າຍ
- ຂະຫຍາຍຜົນມາດຕະການຈັດການນ້ຳ, ໄພແຫ້ງແລ້ງ ແລະ ນ້ຳຖ້ວມໃນພື້ນທີ່ສ່ຽງໄພ

ການຈັດຕັ້ງປະຕິບັດວຽກງານການກຽມພ້ອມຂອງລັດຖະບານ ແລະ ອົງການສະຫະປະຊາຊາດ

ການສະໜັບສະໜູນຄວາມພ້ອມໃຫ້ແກ່ລັດຖະບານ
ບັນດາອົງການສະຫະປະຊາຊາດ ແລະ ຄູ່ຮ່ວມພັດທະນາ ຖືກຮຽກຮ້ອງໃຫ້ເພີ່ມທະວີການປະສານງານ ແລະ ສະໜັບສະໜູນ ກອງເລຂາຄະນະກຳມະການຄຸ້ມຄອງໄພພິບັດຂັ້ນສູນກາງ ໃນການຈັດກຽມວັດຖຸອຸປະກອນ ແລະ ເຄື່ອງຊ່ວຍເຫຼືອທີ່ຈຳເປັນໄວ້ລ່ວງໜ້າ, ການເສີມສ້າງຄວາມພ້ອມຮັບມື, ແລະ ການຈັດສັນການຊ່ວຍເຫຼືອໃຫ້ສອດຄ່ອງກັບ ແຜນກຽມພ້ອມຮັບມື ແລະ ຕອບໂຕ້ສຸກເສີນ ປະຈຳປີ 2026.

ຄວາມສ່ຽງດ້ານການເງິນ ທີ່ໄດ້ຮັບການສະໜັບສະໜູນຈາກ SEADRIF ຮ່ວມກັບ FAO ແລະ WFP
ໂຄງການທີ່ໄດ້ຮັບການສະໜັບສະໜູນຈາກ SEADRIF ຮ່ວມກັບ FAO ແລະ WFP ແມ່ນມີຈຸດປະສົງເພື່ອເສີມສ້າງການຈັດຫາແຫຼ່ງທຶນໄວ້ລ່ວງໜ້າ ສຳລັບການປະຕິບັດງານລ່ວງໜ້າ ແລະ ການຊ່ວຍເຫຼືອທີ່ທັນການ. ໃນນັ້ນ, ໂຄງການທົດລອງທີ່ສະໜັບສະໜູນໂດຍ FAO ແມ່ນເນັ້ນໃສ່ການປະຕິບັດງານລ່ວງໜ້າເພື່ອຮັບມືກັບໄພແຫ້ງແລ້ງ, ໃນຂະນະທີ່ WFP ສຸ່ມໃສ່ດ້ານນະໂຍບາຍໂດຍ ເນັ້ນໃສ່ການຊ່ວຍເຫຼືອແບບຮີບດ່ວນ ພາຍຫຼັງເກີດອຸທົກກະໄພ (ໄພນ້ຳຖ້ວມ) ແລະ ຜົນກະທົບຈາກໄພພິບັດອື່ນໆ.

ແຫຼ່ງຂໍ້ມູນ: ອົງການ WFP ແລະ FAO, ພຶດສະພາ 2026

ແຫຼ່ງຂໍ້ມູນຫຼັກ
WMO (2026), El Niño/La Niña Update, May 2026 (published 2 June 2026)
WMO (2026), Frequently Asked Questions on the El Niño–Southern Oscillation Phenomenon
NOAA (2026), El Niño/Southern Oscillation Diagnostic Discussion, issued 11 June 2026 · FAO, OCHA, WFP & WMO (2026), Asia & the Pacific: Snapshot of El Niño & Middle East Crisis (as of 12 June 2026)
Lao PDR Department of Meteorology & Hydrology, MONRE (2026), El Niño Situation Report No. 2/No. 0553, 16 June 2026
Ministry of Agriculture & Environment (2026), El Niño warning for the 2026 rainy season, notice of 11 May 2026
FAO Lao PDR & SEADRIF (2026), "Southeast Asia's First Anticipatory Drought Insurance Pilot in Lao PDR," 27 May 2026
WFP & SEADRIF (2026), “SEADRIF and WFP Introduce Impact-Based Insurance for Vulnerable People in Lao PDR,” 7 May 2026

UNITED NATIONS LAO PDR

ຮຽບຮຽງໂດຍ: ຫ້ອງການຜູ້ປະສານງານສະຫະປະຊາຊາດປະຈຳ ສປປ ລາວ, ໂດຍໄດ້ຮັບຂໍ້ມູນສະໜັບສະໜູນຈາກບັນດາອົງການສະຫະປະຊາຊາດທີ່ກ່ຽວຂ້ອງ

World Vision

ສະໜັບສະໜຸນການແປໂດຍ : World Vision International Lao PDR